**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະຫະກອນ ອອມຊັບ-ສິນເຊື່ອ ອທອ

ເລກທີ 116 /ສອສ.ອທອ

ນະຄອນຫຼວງວຽງຈັນ, ວັນທີ 5 / 7 / 16.

# ແຈ້ງການ

**ເຖິງ:** ບັນດາສະມາຊິກ ສະຫະກອນ ອອມຊັບ-ສິນເຊື່ອ ອທອ.

**ເລື່ອງ:** ການໂອນຮຸ້ນສະສົມ ຂອງສະມາຊິກທີ່ອອກຈາກ ອທອ ໃຫ້ຄົນໃນຄອບຄົວທີ່ເຮັດວຽກຢູ່ ບໍລິສັດ ອີທີແອລ ມະຫາຊົນ.

- ອີງຕາມ ກົດລະບຽບພາຍໃນ ຂອງ ສະຫະກອນ ອອມຊັບ-ສິນເຊື່ອ ພະນັກງານ ບໍລິສັດ ອີທີແອລ ມະຫາຊົນ ສະບັບເລກທີ 005/ສອສ, ລົງວັນທີ 28/01 /2013.
- ອີງຕາມ ບົດບັນທຶກກອງປະຊຸມສະພາບໍລິຫານ ສອສ ສະໄໝສາມັນ ປະຈຳງວດ 6 ເດືອນຕົ້ນປີ 2016 ສະບັບເລກທີ 105/ສອສ, ລົງວັນທີ 22/06/0216
- ອີງຕາມ ການເຫັນດີຂອງ ປະທານສະພາບໍລິຫານ ສອສ, ໃບສະເໜີ ເລກທີ 114/ສອສ.ອທອ, ລົງວັນທີ 4 ກໍລະກົດ 2016.

ສະຫະກອນ ອອມຊັບ-ສິນເຊື່ອ ອທອ ຂໍຖືເປັນກຽດແຈ້ງມາຍັງບັນດາ ສະມາຊິກ ສອສ ທົ່ວປະເທດຊາບວ່າ ສອສ ເຫັນດີອະນຸມັດໃຫ້ສະມາຊິກທີ່ອອກຈາກການເປັນພະນັກງານຂອງ ອທອ (ກະສຽນອາຍຸ, ລາອອກສ້າງເສດຖະກິດຄອບຄົວ, ເສັຍຊີວິດ) ມີຈຸດປະສົງຢາກສືບຕໍ່ສະສົມຮຸ້ນຂອງຕົນເອງໄວ້ກັບ ສອສ ໃຫ້ປະຕິບັດຕາມລະບຽບເງື່ອນໄຂດັ່ງລຸ່ມນີ້:

1. ຮ່າງໃບສະເໜີ ຂໍໂອນຮຸ້ນສະສົມຂອງຕົນ ໃຫ້ແກ່ບຸກຄົນໃນຄອບຄົວ.
2. ຜູ້ສືບທອດ ຕ້ອງມີສາຍພົວພັນເປັນຍາດສາຍຕັ້ງ ຫລື ຄອບຄົວ(ຜົວ-ເມັຍ) ທີ່ຖືກຕ້ອງຕາມກົດໝາຍ.
3. ຜູ້ສືບທອດ ຕ້ອງເປັນພະນັກງານທີ່ເຮັດວຽກຢູ່ໃນ ບໍລິສັດ ອີທີແອລ ມະຫາຊົນ.

ສະນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ສະມາຊິກ ສອສ ເພື່ອຊາບ.ແລະ ປະຕິບັດຕາມນີ້ດ້ວຍ.

ຜູ້ອຳນວຍການໃຫຍ່ ສອສ

ມົງມາລາ ຊຽງວົງພະຈັນ

ສອບຖາມຂໍ້ມູນ:

- ທ່ານ ແສງດາລັດ ກັດຕິຍະສັກ ໂທ: 020 22210063
- ທ່ານ ນ. ສີສຸພັນ ແກ້ວມະນີວົງ ໂທ: 020 22210090